**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 11 ຕຸລາ 2020 (10-11-2020)**

# ຈົ່ງໃຫ້ກຽດທຸກໆສາຍສັມພັນ

ແມ່ນໃຜໄດ້ເປັນຕົວຢ່າງຂອງຄວາມສັດຊື່ສ່ວນຕົວໃນຊີວິດທ່ານ?

**ຈຸດສຳຄັນໃນບົດຮຽນ:** ຄວາມສັດຊື່ແລະຄວາມພໍໃຈໃນພຣະຄຣິດເປັນພື້ນຖານສຳລັບຄວາມສຳພັນທີ່ດີ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການລະເບີດຂອງໂຄງສ້າງອາຄານສາມາດເປັນສິ່ງທີ່ເບິ່ງແລ້ວກໍໜ້າງຶດງໍ້. ພາຍໃນນຶ່ງນາທີ, ທ່ານມອງເຫັນອາຄານທີ່ຢືນຢູ່ຢ່າງເຕັມສ່ວນ, ສະພານ, ອຸໂມງ; ແລ້ວໃນຊ່ວງພິບຕາດຽວ, ໂຄງສ້າງທັງໝົດກໍໄດ້ພັງທະລາຍລົງເປັນຂີ້ເຖົ່າແລະເສດເຫຼັກ. ທ່າມກາງການມ້າງເພອາຄານໂດຍທາງອາຊີບ, ຜູ້ຊ່ຽວຊານໄດ້ຈັດໃຫ້ການລະເບີດຂນາດນ້ອຍເປັນຈຸດໆຢູ່ທົ່ວໂຄງຮ່າງຂອງຕົວອາຄານ. ການຈັດວາງຍຸທສາດແມ່ນສິ່ງທີ່ສຳຄັນທີ່ຈະທຳລາຍຄວາມສົມບູນຂອງໂຄງສ້າງຂອງອາຄານໂດຍປາສຈາກການທຳລາຍສິ່ງທີ່ຢູ່ອ້ອມຂ້າງ. ຄວາມສັດຊື່ທາງດ້ານໂຄງສ້າງຂອງຊີວິດແລະຄວາມສຳພັນຂອງພວກເຮົາມີຄວາມສຳຄັນເທົ່າກັບການກໍ່ສ້າງຂອງອາຄານ. ມັນໃຊ້ເວລາ *ພຽງວິນາທີດຽວ* ສຳລັບຄວາມສັມພັນໃຫ້ລະເບີດຂຶ້ນ! ພຽງແຕ່ຄຳເວົ້າຕົວະຄຳດຽວສາມາດທຳລາຍຄວາມສັມພັນໃຫ້ຂາດສະບັ້ນລົງ. ຂໍ້ກ່າວຫາບໍ່ຈິງພຽງຄຳດຽວສາມາດທຳລາຍຄວາມຮັບຮູ້ຂອງຜູ້ຄົນຕໍ່ພວກເຮົາ. ທາງເລືອກທີ່ຜິດພຽງຄັ້ງດຽວສາມາດເຮັດໃຫ້ການເຕີບໂຕມາຕັ້ງແຕ່ສິບໆປີໃຫ້ພັງທະລາຍລົງ. ພຣະບັນຍັດສິບປະການໄດ້ໃຫ້ພື້ນຖານອັນເຂັ້ມແຂງໜາແໜ້ນ-*ສ້າງຂຶ້ນເທິງການໃຫ້ກຽດແລະຄວາມພໍໃຈ*-ເພື່ອປະກັນໂຄງສ້າງແຫ່ງຄວາມສັດຊື່ຂອງຄວາມສັມພັນຂອງພວກເຮົາ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

## ການສຶກສາພຣະຄັມພີ

## 1. ອົບພະຍົບ 20:15-16

15 *ຢ່າລັກຊັບ.* 16 *ຢ່າເປັນພະຍານເທັດ ໃສ່ຮ້າຍເພື່ອນບ້ານຂອງຕົນ.*

ວັນນຶ່ງມີສິດຍາພິບານຄົນນຶ່ງໄດ້ຂຶ້ນຣົດເມໂດຍສານ, ໄດ້ຈ່າຍເງິນຄ່າໂດຍສານແກ່ຄົນຂັບຣົດ, ແລ້ວຄົນຂັບຣົດໄດ້ໃຫ້ເງິນທອນແກ່ເພິ່ນ. ຂນະທີ່ລາວນັ່ງລົງ, ນັບເງິນທອນລາວໄດ້ສັງເກດເຫັນຄົນຂັບຣົດໄດ້ໃຫ້ເງິນທອນຫຼາຍໂພດ. ລາວກັບໄປຫາຄົນຂັບຣົດແລ້ວຄືນເງິນໃຫ້ລາວ 2 ຫຼຽນແລະເວົ້າວ່າ: "ເຈົ້າທອນເງິນໃຫ້ຂ້ອຍຫຼາຍໂພດ". ຄົນຂັບຣົດໃຫ້ຮອຍຍິ້ມແລ້ວກ່າວວ່າ: "*ອາຈານເອີຍ, ຂໍຂອບໃຈຫຼາຍໆເດີ ເພາະວ່າຂ້ານ້ອຍໄດ້ໄປນະມັສການທີ່ໂບດຂອງທ່ານມື້ວານນີ້, ແລະຂ້ານ້ອຍໄດ້ຍິນຄຳເທສນາຂອງອາຈານກ່ຽວກັບຄວາມສັດຊື່. ຂ້ານ້ອຍຈຶ່ງທອນເງິນໃຫ້ອາຈານເກີນໄປດ້ວຍຕັ້ງໃຈເຮັດ ເພື່ອລອງເບິ່ງວ່າອາຈານຈະເຮັດຄືຄຳເທສນານັ້ນຫຼືບໍ່* ".

ຄວາມສັດຊື່ສົມຄວນຈະເປັນໄປໂດຍອັຕໂນມັດສຳລັບພວກເຮົາ. ພວກເຮົາບໍ່ຮູ້ຈັກເທື່ອວ່າມີໃຜກຳລັງເບິ່ງການກະທຳຂອງພວກເຮົາຫຼືກຳລັງຟັງຄຳເວົ້າຂອງພວກເຮົາ. ການປະພຶດຕົນໂດຍການໃຫ້ກຽດແລະໂດຍຄວາມສັດຊື່ແມ່ນ

ໝາກຫົວໃຈຂອງພຣະບັນຍັດສິບປະການສອງຂໍ້: *"ຢ່າລັກຊັບ"* ແລະ *"ຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ."* ພວກເຮົາຄວນຈະປະຕິບັດຕໍ່ຄົນອື່ນດ້ວຍຄວາມນັບຖື-ພ້ອມດ້ວຍການນັບຖືຊັບສົມບັດຊຶ່ງເປັນກັມສິດຂອງເພິ່ນ. ວາຈາຂອງພວກເຮົາຕ້ອງສະແດງຄວາມນັບຖືຕໍ່ຄົນອື່ນເໝືອນກັນ. ຄຸນງາມຄວາມດີເຫຼົ່ານີ້ສະແດງອອກໃນຄວາມຮັກ ແລະກຳນົດສານຸສິດຂອງພຣະຣາຊອານາຈັກຂອງພຣະເຈົ້າ. ອົງພຣະເຢຊູໄດ້ຊົງສລຸບເຣື່ອງນີ້ໂດຍຊົງກ່າວວ່າ: *"ຖ້າເຈົ້າທັງຫຼາຍມີຄວາມຮັກເຊິ່ງກັນແລະກັນດັ່ງນີ້ແຫຼະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫຼາຍເປັນສາວົກຂອງເຮົາ."* (ຢຮ 13:35).

ຮັກຊຶ່ງກັນແລະກັນໝາຍເຖິງການເວົ້າຄວາມຈິງໃນຄວາມຮັກສເມີໄປ: *"ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກເພື່ອຈະໄດ້ຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະຄືພຣະຄຣິດ"* (ອຟຊ 4:15). ມີຫຼາຍຄົນແກ້ຕົວເຣື່ອງຂີ້ຕົວະເພາະມັນເປັນພຽງແຕ່ "ການຕົວະເລັກນ້ອຍເທົ່ານັ້ນ." "ການຕົວະເລັກນ້ອຍ" ກໍ່ປຽບເໝືອນເວົ້າວ່າ "ຂ້ອຍຕັ້ງທ້ອງໜ້ອຍດຽວ" (a little pregnant). ບໍ່ດົນບໍ່ນານມັນກໍຈະໃຫຍ່ຂຶ້ນໃຫ້ເຫັນ.

ການຕົວະຈະນຳຜົນສະທ້ອນກັບມາຫາຕົນເອງສເມີໄປ. ດ້ວຍເຫດຜົນນີ້ເທົ່ານັ້ນ, ພວກເຮົາຈຶ່ງບໍ່ສົມຄວນຕົວະ. ແຕ່ຍິ່ງໄປກວ່ານັ້ນ, ພວກເຮົາຈຳເປັນຕ້ອງດຳເນີນຊີວິດດ້ວຍຄວາມສັດຊື່ເພາະວ່າຊີວິດໄດ້ມອບໃຫ້ແກ່ພວກເຮົາໂດຍວິຖີທາງຊຶ່ງຈະນຳພຣະຣັສມີມາສູ່ພຣະເຈົ້າແລະຂຍາຍພຣະຣາຊອານາຈັກຂອງພຣະອົງຢູ່ໃນໂລກນີ້. ຊີວິດຂອງພວກເຮົາສົມຄວນຈະເປັນແວ່ນແຍງໃຫ້ເຫັນພຣະອົງຜູ້ໄດ້ຊົງສ້າງພວກເຮົາ. ໃນເວລາທີ່ພວກເຮົາປະຕິບັດງານຢູ່ນອກຄຸນງາມຄວາມດີຂອງພຣະຣາຊອານາຈັກຂອງພຣະເຈົ້າ, ພວກເຮົາບໍ່ໄດ້ສະທ້ອນໃຫ້ເຫັນຄວາມຈິງຂອງພຣະເຈົ້າ. ແທນທີ່, ພວກເຮົາກຳລັງສະແດງຄວາມຫຼອກລວງຂອງຊາຕານ, "ພໍ່ແຫ່ງຄວາມຂີ້ຕົວະ" (ຢຮ 8:44).

ດຳເນີນຊີວິດແຫ່ງຄວາມສັດຊື່ໝາຍເຖິງການສ້າງແບບຈຳລອງຂອງແນວຄິດ, ຂອງຄຳເວົ້າ, ແລະຂອງການປະພຶດປະຕິບັດຕາມວິຖີທາງຂອງພຣະເຈົ້າ. ໃນຂນະທີ່ພວກເຮົາກະທຳເຊັ່ນນັ້ນ, ພວກເຮົາສາມາດຂຍາຍພຣະຣາຊອານາຈັກຂອງພຣະອົງຢູ່ໃນໂລກນີ້ໃນຂນະດຽວກັນທີ່ພວກເຮົານຳພຣະຣັສມີມາສູ່ພຣະອົງແລະຄວາມດີມາສູ່ຄົນອື່ນ.

| |
|---|
| ເມື່ອຜູ້ຄົນດຳເນີນຊີວິດດ້ວຍຄວາມບໍ່ຊື່ສັດສຸຈຣິດ ສິ່ງນີ້ຈະນຳຜົນສະທ້ອນແນວໃດມາສູ່ສັງຄົມ? |

## 2. ອົບພະຍົບ 20:17

*17 ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ. ຢ່າອິດສາຢາກໄດ້ເມັຍຫຼືເມັຽຂອງເພື່ອນບ້ານ, ຢ່າອິດສາຢາກໄດ້ຂ້ອຍທາດ, ຢາກໄດ້ງົວ,ຢາກໄດ້ຄວາຍ, ຢາກໄດ້ລໍ ຫຼື ສິ່ງອື່ນໃດທີ່ເປັນຂອງຄົນອື່ນ."*

ນິທານ ອີສົບ ເຣື່ອງ "ໝາກັບຕ່ອນຊີ້ນ" ໄດ້ເລົ່າວ່າມີໝາໂຕນຶ່ງຄາບຕ່ອນຊີ້ນຍ່າງຂ້າມຂົວໄປ. ໃນຂນະທີ່ມັນໄຕ່ຂົວໄປນັ້ນ ມັນສັງເກດເຫັນເງົາສະທ້ອນຢູ່ໃນນ້ຳ: ມີໝາຕົວນຶ່ງຄາບຕ່ອນຊີ້ນທີ່ໃຫຍ່ຫຼາຍກວ່າຕ່ອນທີ່ຢູ່ໃນປາກຂອງຕົນເອງ. ດ້ວຍຄວາມໂລບ, ມັນຢາກໄດ້ຊີ້ນຕ່ອນທີ່ໃຫຍ່ກວ່າມັນຈຶ່ງອ້າປາກອອກເພື່ອຈະໄປຄາບເອົາຕ່ອນໃຫຍ່ນັ້ນ. ໃນທັນທີທັນໃດ, ຊີ້ນທີ່ຢູ່ໃນປາກກໍ່ເລີຍຫຼຸດຈົມລົງໄປພື້ນນ້ຳ. ບໍ່ພຽງແຕ່ບໍ່ໄດ້ຊີ້ນຕ່ອນທີ່ຕົນເຫັນວ່າໃຫຍ່ກວ່າເທົ່ານັ້ນ, ຊີ້ນຕ່ອນທີ່ຢູ່ໃນປາກຂອງຕົນກໍ່ເສັຽໄປອີກດວ້ຍ. ນິທານເຣື່ອງນີ້ສອນໃຫ້ຮູ້ວ່າ "***ໂລບມາກ ມັກລາບຫາຍ***".

ຄວາມພໍໃຈບໍ່ໄດ້ຢູ່ໃນຂອງເຊັ່ນນັ້ນ. ຄວາມພໍໃຈແມ່ນການຮູ້ວ່າພຣະເຈົ້າໄດ້ຊົງຕອບສນອງຄວາມຕ້ອງການ (ຄວາມຈຳເປັນ) ຂອງທ່ານ ແລະສົມທົບກັບການຮັບຮູ້ນັ້ນດ້ວຍຄວາມກະຕັນຍູຮູ້ພຣະຄຸນຂອງພຣະເຈົ້າ.

- **ຄວາມພໍໃຈ** ແມ່ນການທີ່ມີຄວາມສຸກຂັບຂີ່ຣົດອີຮ້າງເກົ່າໆເໝືອນດັ່ງຂັບຂີ່ຣົດເບັນ (ເມີເຊດີສ Mercedes) ອອກຫ້າງໃໝ່ອ່ຽມ.*ທັງສອງກໍລະນີທ່ານຍັງມີຍານພາຫະນະນຳໄປສູ່ຈຸດໝາຍປາຍທາງດັ່ງປາຖນາ.*

- **ຄວາມພໍໃຈ** ແມ່ນການທີ່ມີຄວາມສຸກອາສັຍຢູ່ໃນບ້ານເຊົ່າຂນາດ 800 ຕລາງຟຸດເໝືອນດັ່ງດຽວກັບອາສັຍຢູ່ໃນເຮືອນຕົນເອງຂນາດ 4,000 ຕລາງຟຸດ.*ທັງສອງກໍລະນີທ່ານຍັງມີຫຼັງຄາກວມຫົວທ່ານຢູ່.*
- **ຄວາມພໍໃຈ** ແມ່ນການທີ່ມີຄວາມສຸກກິນ ຮັດທ໌ດອກ (hot dog) ເທົ່າທຽມກັນກັບກິນທີໂບນ(T-bone)ສະເຕັກ. *ທັງສອງກໍລະນີທ່ານບໍ່ໄດ້ຫິວກະຫາຍເລີຍ.*
- **ຄວາມພໍໃຈ** ແມ່ນການທີ່ມີຄວາມສຸກສວມໃສ່ເສື້ອຜ້າຊື້ຈາກຮ້ານຂາຍເລ ເທົ່າທຽມກັນກັບເສື້ອຜ້າຊື້ຈາກຮ້ານເສື້ອຜ້າແຟຊັ່ນຊື່ສຽງໂດ່ງດັງ. *ທັງສອງກໍລະນີທ່ານມີເສື້ອຜ້າອາພອນປົກຫຸ້ມທ່ານໄວ້.*

ເຄັດລັບຂອງຄວາມພໍໃຈແມ່ນເກີດຈາກການຮູ້ວ່າທຸກສິ່ງທີ່ພວກເຮົາມີແລະທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ນັ້ນແມ່ນໄດ້ມາໂດຍຜ່ານພຣະຄຣິດຜູ້ຊົງເສີມສ້າງພວກເຮົາ ແລະຊົງຈັດຫາໃຫ້ພວກເຮົາ. ຄວາມພໍໃຈແມ່ນກຸນແຈສຳຄັນໃນການດຳເນີນຊີວິດຢ່າງຊື່ສັດເພາະວ່າມັນໃຫ້ຄວາມປອດພັຍທີ່ຈຳເປັນໃນການພັກຜ່ອນ, ໃນຄວາມເປັນຈິງ, ໃນປະຈຸບັນ. *ຈົ່ງຊອກຫາຄວາມພໍໃຈໃນສິ່ງທີ່ພຣະເຈົ້າຊົງຈັດຫາໃຫ້ ແລ້ວທ່ານຈະພົບຄວາມລັບໃນຊີວິດທີ່ອີ່ມໃຈ.*

**ມີຂັ້ນຕອນໃດແດ່ທີ່ພວກເຮົາສາມາດປະຕິບັດໄດ້ເພື່ອປ້ອງກັນຄວາມໂລບມາກໃນຊີວິດຂອງພວກເຮົາ?**

## 3. ເພງສັຣເສີນ 37:1-6

*1 ຢ່າເສັຽໃຈຍ້ອນຄົນຊົ່ວ.ຢ່າອິດສາຜູ້ທີ່ໄດ້ມາໃນທາງຜິດ. 2 ພວກເຂົາຈະສູນເສັຽໄປເໝືອນຫຍ້າທີ່ຫ່ຽວ*
*ແຫ້ງລົງ, ພວກເຂົາຈະຕາຍເໝືອນດັ່ງຕົ້ນໄມ້ທີ່ຫ່ຽວແຫ້ງ. 3 ຈົ່ງເຊື່ອຟັງພຣະຜູ້ເປັນເຈົ້າແລະສ້າງແຕ່ຄວາມ*
*ດີແລ້ວອາສັຍຢູ່ໃນປະເທດຂອງຕົນຢ່າງປອດໄພ. 4 ຈົ່ງຊອກຫາຄວາມສຸກໃນພຣະຜູ້ເປັນເຈົ້າແລະພຣະອົງ*
*ຈະປະທານໃຫ້ຕາມໃຈມັກຂອງເຈົ້າ. 5 ຈົ່ງຖວາຍຕົວເອງແດ່ພຣະຜູ້ເປັນເຈົ້າ, ຈົ່ງເຊື່ອຟັງພຣະອົງແລະພຣະ*
*ອົງຈະຊ່ອຍເຫລືອເຈົ້າ. 6 ພຣະອົງຈະຊົງກະທຳໃຫ້ຄວາມດີຂອງເຈົ້າຊ່າລືໄປ.*

ຖ້ອຍຄຳເຫຼົ່ານີ້ຈາກກະສັດດາວິດເອົາໃຈໃສ່ໃນພຣະບັນຍັດທີ່ຫ້າມບໍ່ໃຫ້ໂລບມາກ. ພຣະອົງເລີ່ມຕົ້ນດ້ວຍການເຕືອນສະຕິພວກເຮົາບໍ່ໃຫ້ອິດສາຜູ້ທີ່ເຮັດຜິດ. ມັນເປັນການງ່າຍທີ່ຈະອິດສາບັນດາຜູ້ທີ່ບໍ່ນັບຖືແລະໃຫ້ກຽດພຣະເຈົ້າແຕ່ເບິ່ງຄືວ່າມີຄວາມສຳເລັດຈະເຣີນຮຸ່ງເຮືອງ. ດັ່ງທີ່ຜູ້ຂຽນບົດເພງສັຣເສີນອີກຄົນນຶ່ງໄດ້ຂຽນໄວ້ວ່າ: "*ແຕ່ຝ່າຍຂ້ານ້ອຍຂ້ານ້ອຍເກືອບລົ້ມລົງ ຕີນຂອງຂ້ານ້ອຍເກືອບມື່ນພະລາດໄປ. ເພາະຂ້ານ້ອຍໄດ້ອິດສາຄົນຈອງຫອງຄືຄົນຊົ່ວຮ້າຍທີ່ຈະເລີນຮຸ່ງເຮືອງ.*" (ພສສ 73:2-3).

ຢາແກ້ພິດສຳລັບຄວາມອິດສາແລະຄວາມບໍ່ພໍໃຈດັ່ງກ່າວແມ່ນມາຈາກການສແວງຫາພຣະເຈົ້າແທນທີ່ຈະຈ້ອງເບິ່ງໄປທີ່ຄົນຊົ່ວ. ພວກເຮົາຕ້ອງ "ໄວ້ວາງໃຈ" ແລະ "ຊື່ນຊົມຍິນດີ" ໃນພຣະອົງແລະພຣະອົງພຽງຜູ້ດຽວ. ທັງໝົດທີ່ ພວກ *ເຮົາສາມາດປາຖນາຢູ່ໃນພຣະເຈົ້າ.*

ບໍ່ມີຜູ້ໃດໃນພວກເຮົາຈຳເປັນຕ້ອງກະວົນກະວາຍຫຼືບໍ່ສະບາຍໃຈກ່ຽວ ກັບບັນດາຜູ້ຄົນທີ່ປະສົບຜົນສຳເລັດຫຼືແມ່ນຫຍັງທີ່ພວກເພິ່ນກຳລັງເຮັດຢູ່. ມັນເປັນການປົກກະຕິທີ່ຈະອຽງໄປສູ່ການປຽບທຽບ, ແຕ່ມັນບໍ່ໄດ້ມີຄວາມໝາຍ ວ່າ

ນີ້ ສະແດງເຖິງສຸກຂະພາບດີ. ພວກເຮົາສາມາດປ່ອຍວາງການແຂ່ງຂັນ ແລະໂອບກອດຄວາມສຳເລັດໃນອົງພຣະຄຣິດ. ເມື່ອທ່ານເຮັດດັ່ງນັ້ນ, ທ່ານຈະໄດ້ຮັບຄວາມປາຖະໜາໃນຫົວໃຈຂອງທ່ານ. ທ່ານຈະໄດ້ຮັບສິ່ງທີ່ພຣະເຈົ້າມີສຳລັບທ່ານ- ແລະພຣະອົງຈະບໍ່ຊົງຂາດເຂີນຈັກເທື່ອໃນສິ່ງທີ່ພຣະອົງຊົງປະທານ! ພຣະອົງຊົງມີຂອງປະທານພຽງພໍຢູ່ສເມີ. ຈົ່ງມອບຫົວໃຈຂອງທ່ານແກ່ອົງພຣະຄຣິດ ໂດຍມອບຄວາມຈົງຮັກພັກດີຂອງທ່ານໃຫ້ກັບພຣະອົງ. ຫຼັງຈາກນັ້ນ, ຈົ່ງສັງເກດເບິ່ງພຣະອົງຊົງເຮັດໃຫ້ທ່ານມີຄວາມສຸກໃນຂນະທີ່ພຣະອົງຊົງພໍພຣະທັຍກັບທ່ານ.

| |
|---|
| ມີຫຼັກຖານຫຍັງແດ່ທີ່ທ່ານເຫັນວ່າ ພຣະບັນຊາຕ່າງໆຂອງພຣະເຈົ້າເປັນຜົນດີສຳລັບທ່ານ? |

## <u>ນຳໃຊ້ໃນຊີວິດ</u>

ທ່ານຈະສແດງຫາຢ່າງຈິງຈັງແນວໃດເພື່ອດຳເນີນຊີວິດທີ່ມີຄວາມສັດຊື່? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງທົດສອບວາຈາຂອງທ່ານ.** ຈົ່ງມີສະຕິລະວັງຕົວຕໍ່ຄຳເວົ້າແລະການກະທຳຂອງທ່ານໃນອາທິດນີ້. ຖ້າທ່ານຫາກຖືກທົດລອງໃຫ້ເວົ້າ ແລະ ປະຕິບັດໃນສິ່ງໃດກໍ່ຕາມທີ່ເປັນການບໍ່ສັດຊື່ ຫຼື ບໍ່ເປັນຈິງ, ຈົ່ງຫັກຫ້າມຕົນເອງ. <u>*ຈົ່ງຕັ້ງຈິດຕັ້ງໃຈໃຫ້ເປັນບຸກຄົນແຫ່ງຄວາມສັດຊື່*</u>.
- **ຈົ່ງຈົດຈຳ.** ຈົ່ງຕັ້ງໃຈຈົດຈຳພຣະຄັມພີ 2 ໂກຣິນໂທ 9:8 "*ແລະພຣະເຈົ້າຜູ້ຊົງຣິດອາດປະທານພຣະຄຸນອັນອຸດົມທຸກຢ່າງແກ່ເຈົ້າທັງຫລາຍເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສຳລັບຕົວສເມີທັງຈະມີສິ່ງຂອງບໍຣິບູນສຳລັບການງານດີທຸກຢ່າງດ້ວຍ.* "ຂໍໃຫ້ພຣະຄຳຂໍ້ນີ້ສືບຕໍ່ເຕືອນທ່ານເລື້ອຍໆວ່າທ່ານ<u>*ມີແລ້ວທຸກສິ່ງທຸກຢ່າງທີ່ທ່ານຕ້ອງການ*</u>.
- **ຈົ່ງໃຫ້ກຳລັງໃຈ.** ພວກເຮົາທຸກຄົນສາມາດນຳໃຊ້ບາງຄຳຢືນຢັນໃນແງ່ດີ (ໃນທາງບວກ) ໃນດ້ານຄວາມຊື່ສັດແລະຄວາມພໍໃຈ. ສິ່ງທີ່ພວກເຮົາເບິ່ງໃນສື່ສານມວນຊົນສາມາດເຮັດໃຫ້ເຮົາບໍ່ພໍໃຈກັບຊີວິດຂອງເຮົາເອງ. ຈົ່ງເລືອກທີ່ຈະເປັນແຫຼ່ງກຳລັງໃຈໃຫ້ກັບບັນດາຜູ້ທີ່ຕໍ່ສູ້ກັບຄວາມບໍ່ພໍໃຈຢູ່ໃນວັນນີ້.

ຈົ່ງພິຈາຣະນາເບິ່ງຜົນກະທົບທີ່ການດຳເນີນຊີວິດທີ່ມີຄວາມສັດຊື່ແລະທີ່ມີຄວາມພໍໃຈຈະມີຕໍ່ຄົນທີ່ຢູ່ອ້ອມຂ້າງທ່ານ. ຂໍໃຫ້ພຣະເຈົ້າຊົງເສີມສ້າງພະລັງ ແລະຊົງໃຫ້ອຳນາດເຂັ້ມແຂງໃຫ້ທ່ານເປັນຄົນທີ່ຮັກສາລົມຫາຍໃຈຂອງພຣະບັນຍັດສືບປະການຜ່ານຊີວິດແຫ່ງຄວາມຮັກ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ**http://lsbf.us/ **ໂດຍSSK**